ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ເຈົ້າແຂວງ

2142

ເລກທີ /ຈຂ.ສຂ

ວັນທີ 25 NOV 2020

# ຂໍ້ຕົກລົງ

## ຂອງທ່ານເຈົ້າແຂວງສະຫວັນນະເຂດ

## ວ່າດ້ວຍ ການຄຸ້ມຄອງການບໍລິການ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ 4 ມາດຕາ 20 ຂໍ້ 13;
- ອີງຕາມ ກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ດຳລັດຂອງ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 315/ລບ, ລົງວັນທີ 02 ຕຸລາ 2017;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 9 ສະພາປະຊາຊົນແຂວງ ຊຸດທີ I ສະບັບເລກທີ 29/ສພຂ.ສຂ, ລົງວັນທີ 23 ຕຸລາ 2020.

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາການເຄື່ອນໄຫວທຸລະກິດບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ເພື່ອຮັບປະກັນໃຫ້ການບໍລິການມີຄຸນນະພາບ, ໄດ້ມາດຕະຖານ, ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ ແນໃສ່ຊຸກຍູ້ສົ່ງເສີມໃຫ້ຜູ້ປະກອບການ ແລະ ຜູ້ໃຊ້ບໍລິການ ປະກອບສ່ວນໃນການປົກປັກຮັກສາວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ ແລະ ການພັດທະນາເສດຖະກິດ-ສັງຄົມຂອງແຂວງສະຫວັນນະເຂດໃຫ້ນັບມື້ນັບດີຂຶ້ນ.

**ມາດຕາ 2 ການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ແມ່ນການສ້າງເງື່ອນໄຂອໍານວຍຄວາມສະດວກ, ຕິດຕາມກວດກາ ແລະ ຊຸກຍູ້ແນະນໍາໃຫ້ຜູ້ປະກອບການພ້ອມດ້ວຍຜູ້ໃຊ້ບໍລິການເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ລັດວາງອອກ, ເພື່ອຮັບປະກັນໃຫ້ການດໍາເນີນທຸລະກິດມີປະສິດທິຜົນ ແລະ ມີຄວາມສະຫງົບເປັນລະບຽບຮຽບຮ້ອຍ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ການຄຸ້ມຄອງ** ໝາຍເຖິງ ການອະນຸຍາດສ້າງຕັ້ງ, ສືບຕໍ່, ການໂຈະ ຫຼື ຍຸບເລີກ, ການຕິດຕາມກວດກາ ແລະ ແນະນໍາຜູ້ປະກອບການ ລວມທັງຜູ້ທີ່ໃຊ້ບໍລິການ;

2. **ການບໍລິການ** ໝາຍເຖິງ ການຕອບສະໜອງຄວາມຕ້ອງການຂອງບຸກຄົນ, ນິຕິບຸກຄົນ ໃຫ້ໄດ້ຮັບຄວາມພໍໃຈ, ມີຄວາມສຸກ, ຄວາມເບີກບານມ່ວນຊື່ນ ແລະ ເປັນລະບຽບຮຽບຮ້ອຍ;

3. **ພັດຕາຄານ** ໝາຍເຖິງ ອາຄານ ຫຼື ສະຖານທີ່ບໍລິການອາຫານ ແລະ ເຄື່ອງດື່ມ ຊຶ່ງມີສະຖານທີ່ກວ້າງຂວາງ ແລະ ສາມາດໃຫ້ການບໍລິການງານຕ່າງໆ;

4. **ສວນອາຫານ** ໝາຍເຖິງ ສະຖານທີ່ ທີ່ມີເນື້ອທີ່ກວ້າງຂວາງ ແລະ ມີທິວທັດສວຍງາມ ຊຶ່ງໃຫ້ການບໍລິການອາຫານ ແລະ ເຄື່ອງດື່ມ;

5. **ຮ້ານອາຫານ** ໝາຍເຖິງ ສະຖານທີ່ບໍລິການອາຫານເປັນຕົ້ນຕໍໃນນັ້ນອາດຈະມີທັງບໍລິການເຄື່ອງດື່ມເປັນສໍາຮອງ ບົນພື້ນຖານການໃຊ້ຈ່າຍຄ່າບໍລິການຕາມເງື່ອນໄຂ ແລະ ລະດັບການບໍລິການທີ່ແຕກຕ່າງກັນ;

6. **ຮ້ານກິນດື່ມ** ໝາຍເຖິງ ສະຖານທີ່ບໍລິການເຄື່ອງດື່ມເປັນຕົ້ນຕໍ ພ້ອມທັງບໍລິການອາຫານເບົາເປັນສໍາຮອງ ຊຶ່ງລວມທັງຮ້ານປີ້ງແກ້ມບົນພື້ນຖານການໃຊ້ຈ່າຍຄ່າບໍລິການຕາມເງື່ອນໄຂ ແລະ ລະດັບການບໍລິການ ທີ່ແຕກຕ່າງກັນ;

7. **ຮ້ານອາຫານ ແລະ ຮ້ານກິນດື່ມ ທີ່ມີການບັນເທີງ** ໝາຍເຖິງ ຮ້ານທີ່ນໍາໃຊ້ແສງ, ສີ, ສຽງ ແລະ ຮ້ອງເພງໂຟກຊອງ ນັບທັງການເປີດເພງທີ່ມີພາບ ແລະ ສຽງເບົາໆ ແຕ່ຕ້ອງມີຫ້ອງເກັບສຽງບໍ່ໃຫ້ລົບກວນຊຸມຊົນຂ້າງຄຽງ;

8. **ຮ້ານອາຫານ ແລະ ຮ້ານກິນດື່ມ ຂະໜາດຈຸລະວິສາຫະກິດ ຫຼື ເສດຖະກິດຄອບຄົວຂະໜາດນ້ອຍສຸດ** ໝາຍເຖິງ ວິສາຫະກິດຂະໜາດນ້ອຍສຸດຂອງຂະແໜງການຜະລິດສິນຄ້າ, ການຄ້າ ແລະ ການບໍລິການໂດຍມີແຮງງານ, ມູນຄ່າຊັບສິນ ແລະ ຍອດລາຍຮັບມູນຄ່າທຸລະກິດປະຈໍາປີ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການໃນແຕ່ລະໄລຍະ;

9. **ສະຖານທີ່ບັນເທີງ** ໝາຍເຖິງ ຂອບເຂດເນື້ອທີ່ຂອງບັນດາຫົວໜ່ວຍທຸລະກິດບໍລິການບັນເທີງປະເພດໃດໜຶ່ງຕັ້ງຢູ່ ແລະ ນໍາໃຊ້ເພື່ອບໍລິການບັນເທີງ;

10. **ການບັນເທີງ** ໝາຍເຖິງ ຄວາມເບີກບານມ່ວນຊື່ນ, ໃຫ້ຄວາມສຸກສັນດ້ວຍສຽງເພງ, ສຽງດົນຕີ, ຂັບລໍາ, ຕະຫຼົກ, ຟ້ອນ, ສະແດງລະຄອນ ແລະ ອື່ນໆ;

**11. ດິດສະໂກເທັກ (ສະເພາະຮ້ານບັນເທີງ)** ໝາຍເຖິງ ການຟ້ອນ ແລະ ເຕັ້ນລຳ ດ້ວຍການເປີດສຽງເພງ ແລະ ດົນຕີ ທີ່ບັນທຶກໄວ້ໃນເຄື່ອງ ຫຼື ອຸປະກອນເກັບສຽງເພງ ແລະ ພາບ ເພື່ອສ້າງຄວາມເບີກບານມ່ວນຊື່ນ;

**12. ໄນຄລັບ ຫຼື ໂຟກຊອງ** ໝາຍເຖິງ ການຮ້ອງປະສານໃສ່ດົນຕີພື້ນເມືອງຂອງຕ່າງປະເທດ ຊຶ່ງປະກອບດ້ວຍ: ກີຕ້າໂປ່ງ,ແຄນອາໂມນິກາ, ໝາກແຊັກ, ກອງຕົບ;

**13. ພັບ** ໝາຍເຖິງ ການບໍລິການສຽງເພງ ແລະ ດົນຕີສົດ ຫຼື ເພງ ແລະ ດົນຕີບັນທຶກໄວ້ໃນເຄື່ອງເອເລັກໂຕຣນິກກ່ຽວກັບສຽງ ແລະ ພາບ ຫຼື ມີແຕ່ສຽງເພງ ແລະ ສຽງດົນຕີ ເທົ່ານັ້ນ;

**14. ສະເນັກບາຣ** ໝາຍເຖິງ ຮ້ານອາຫານວ່າງ ສາມາດສ້າງຕັ້ງຂຶ້ນຢູ່ສະຖານທີ່ບັນເທີງສະເພາະ ຫຼື ຢູ່ພາຍໃນໂຮງແຮມ, ລີສອດ, ຮ້ານອາຫານ, ພັດຕາຄານຕາມເງື່ອນໄຂ ແລະ ມາດຕະຖານຂອງສະເນັກບາຣ ພ້ອມບໍລິການເຄື່ອງດື່ມປະເພດເຫຼົ້າ, ເບຍ, ເຄື່ອງດື່ມທົ່ວໄປ ແລະ ສຽງເພງ;

**15. ບາຣ** ໝາຍເຖິງ ສະຖານທີ່ບັນເທີງສະເພາະ ຫຼື ຢູ່ພາຍໃນໂຮງແຮມ, ລີສອດ, ຮ້ານອາຫານ, ພັດຕາຄານຕາມເງື່ອນໄຂ ແລະ ມາດຕະຖານຂອງບາຣ ພ້ອມບໍລິການເຄື່ອງດື່ມປະເພດເຫຼົ້າ, ເບຍ, ເຄື່ອງດື່ມທົ່ວໄປ ແລະ ສຽງເພງ;

**16. ຄາຣາໂອເກະ** ໝາຍເຖິງ ຮ້ານສຳລັບຮ້ອງເພງຄາຣາໂອເກະທີ່ມີອຸປະກອນ ສຳລັບໄວ້ບໍລິການຮ້ອງເພງໄປຕາມທຳນອງເພງ, ສຽງດົນຕີ ແລະ ເນື້ອຮ້ອງທີ່ສະແດງອອກຜ່ານຈໍພາບ ເປັນຕົວອັກສອນຄາຣາໂອເກະ;

**17. ຄອນເສີດ** (ສະເພາະຮ້ານບັນເທີງ) ໝາຍເຖິງ ການສະແດງດົນຕີ, ຮ້ອງເພງ, ຂັບ, ລຳ, ຟ້ອນ, ເຕັ້ນລຳແບບປະສົມປະສານເປັນໝູ່ຄະນະ ຫຼື ດ່ຽວ ດ້ວຍຈັງຫວະທຳນອງຕ່າງໆ;

**18. ເດຊີເບວ** ໝາຍເຖິງ ຫົວໜ່ວຍວັດແທກລະດັບຄວາມດັງຂອງສຽງ;

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມ ອຳນວຍຄວາມສະດວກໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນໃສ່ທຸລະກິດບໍລິການ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງພາຍໃນແຂວງໃຫ້ໄດ້ຮັບການພັດທະນາດີຂຶ້ນ;

ອົງການປົກຄອງແຂວງ ປົກປ້ອງສິດຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ໃຫ້ມີຄວາມຍຸຕິທຳ, ໂປ່ງໃສ ແລະ ເຄື່ອນໄຫວຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບຫຼັກການທີ່ກຳນົດໄວ້.

**ມາດຕາ 5 ຫຼັກການກ່ຽວກັບການບໍລິການ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

1. ການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການຕ່າງໆຂອງລັດກຳນົດໄວ້;

2. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບ, ປອດໄພ, ໂປ່ງໃສ, ຍຸຕິທຳ, ມີການຄຸ້ມຄອງເປັນເອກະພາບ, ສາມາດກວດສອບໄດ້, ຮັບປະກັນການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ;

3. ຮັບປະກັນຄວາມເປັນເອກະລັກທາງດ້ານສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າພາຍໃນແຂວງກໍ່ຄືຂອງຊາດ, ປົກປັກຮັກສາສິ່ງແວດລ້ອມໃຫ້ສະອາດ, ປອດໃສ ແລະ ສວຍງາມ;

4. ການຈັດຕັ້ງແຕ່ລະຂັ້ນ ກໍ່ຄືຂະແໜງການທີ່ກ່ຽວຂ້ອງນັບທັງຫົວໜ່ວຍທຸລະກິດທີ່ໃຫ້ບໍລິການ, ຜູ້ໃຊ້ບໍລິການ ຕ້ອງມີສ່ວນຮ່ວມໃນການເຄົາລົບ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ແມ່ນນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຄຸ້ມຄອງ ແລະ ດຳເນີນທຸລະກິດການບໍລິການ, ຜູ້ໃຊ້ບໍລິການຮ້ານອາຫານ, ຮ້ານກິນດື່ມທີ່ມີການບັນເທີງ ແລະ ຮ້ານບັນເທີງ ຢູ່ພາຍໃນແຂວງສະຫວັນນະເຂດ.

## ໝວດທີ 2

## ປະເພດ ແລະ ມາດຕະຖານ

## ການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ

**ມາດຕາ 7 ປະເພດການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ການບໍລິການຮ້ານອາຫານ ແລະ ຮ້ານກິນດື່ມ ປະກອບດ້ວຍ:

1. ພັດຕາຄານ
2. ຮ້ານອາຫານ
3. ສວນອາຫານ
4. ຮ້ານກິນດື່ມ

ການບໍລິການບັນເທີງ ປະກອບດ້ວຍ:

1. ດິດສະໂກເທັກ;
2. ໄນຄລັບ;
3. ພັບ;
4. ສະເນັກບາຣ;
5. ບາຣ;
6. ຄາຣາໂອເກະ;
7. ຄອນເສີດ.

**ມາດຕາ 8 ມາດຕະຖານການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ມາດຕະຖານການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ຕ້ອງຮັບປະກັນໃນບາງດ້ານດັ່ງນີ້:

1. ຕ້ອງມີຕຶກ, ອາຄານແໜ້ນໜາຖາວອນ ແລະ ສວຍງາມ ເພື່ອສ້າງຄວາມໝັ້ນໃຈ ແລະ ເປັນສິ່ງຈູງໃຈໃຫ້ແກ່ຜູ້ມາໃຊ້ບໍລິການໃນລະດັບແນ່ນອນ;

2. ສະຖານທີ່ຕັ້ງຂອງຮ້ານກິນດື່ມ ແລະ ຮ້ານບັນເທີງ ຕ້ອງຫ່າງຈາກສະຖານທີ່ການສຶກສາ, ໂຮງໝໍ, ວັດວາອາຮາມ, ສະຖານທີ່ສັກສິດ, ສະຖານທີ່ອະນຸລັກ ແລະ ສຳນັກງານອົງການຕ່າງໆ ຢ່າງໜ້ອຍ 500 ແມັດ ຂຶ້ນໄປ;

3. ສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ປອດໄພ ໃນຫຼາຍດ້ານເຊັ່ນ: ມີສະຖານທີ່ຈອດລົດທີ່ເໝາະສົມສະດວກໃຫ້ແກ່ການສັນຈອນ, ມີຫ້ອງນ້ຳບໍລິການຮັບໃຊ້ແທດເໝາະແຕ່ລະເປົ້າໝາຍ ແລະ ລະບົບປ້ອງກັນອັກຄີໄພໃນລະດັບທີ່ແນ່ນອນ;

4. ການໂຄສະນາ, ການປະດັບປະດາດ້ວຍຮູບພາບ ຫຼື ສີຕ່າງໆ ໃຫ້ຖືກຕ້ອງຕາມວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນລາວບັນດາເຜົ່າ;

5. ການນຳໃຊ້ເພງ-ລຳ, ການຮ້ອງ-ການເສບ ແລະ ການເຕັ້ນ-ການຟ້ອນ ຕ້ອງເປັນເອກະລັກຂອງລາວກວມ 70% ຂຶ້ນໄປ;

ສຳລັບມາດຕະຖານລວມ ແລະ ມາດຕະຖານສະເພາະ ກ່ຽວກັບຮ້ານບັນເທີງແມ່ນໃຫ້ປະຕິບັດຕາມດຳລັດວ່າດ້ວຍການບັນເທີງ ສະບັບເລກທີ 315/ລບ, ລົງວັນທີ 02 ຕຸລາ 2017.

**ມາດຕາ 9 ຮ້ານອາຫານ ແລະ ຮ້ານກິນດື່ມ ຂະໜາດຈຸລະວິສາຫະກິດ ຫຼື ເສດຖະກິດຄອບຄົວຂະໜາດນ້ອຍສຸດ**

ຮ້ານອາຫານ ແລະ ຮ້ານກິນດື່ມ ຂະໜາດຈຸລະວິສາຫະກິດ ຫຼື ເສດຖະກິດຄອບຄົວຂະໜາດນ້ອຍສຸດທີ່ບໍ່ມີການບັນເທີງ, ການເປີດບໍລິການຮັບໃຊ້ລູກຄ້າຕ້ອງຮັບປະກັນຄວາມສະອາດ, ປອດໄພຖືກຫຼັກສຸຂານາໄມທີ່ໄດ້ກຳນົດໄວ້ໃນລະບຽບການ;

ການປະກອບທຸລະກິດ ອາຫານ ແລະ ເຄື່ອງດື່ມທີ່ບໍ່ມີການບັນເທີງ ເຊັ່ນ: ການຂາຍອາຫານ, ຂາຍເຄື່ອງດື່ມປະຈຳສະຖາບັນການສຶກສາ, ໂຮງຮຽນ, ໂຮງໝໍ, ສຳນັກງານອົງການຕ່າງໆ, ນັບທັງການປະກອບອາຫານ, ເຄື່ອງດື່ມຮັບໃຊ້ຜູ້ໂດຍສານໃນຍານພາຫະນະຂົນສົ່ງມວນຊົນປະເພດຕ່າງໆ ແລະ ການເລາະຂາຍຕາມແຄມທາງ ຫຼື ສະຖານທີ່ສາທາລະນະບໍ່ຈຳເປັນຕ້ອງຂໍອະນຸຍາດດຳເນີນທຸລະກິດ ແຕ່ໃຫ້ຜູ້ປະກອບການປະຕິບັດຕາມເງື່ອນໄຂຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 3
## ການອະນຸຍາດສ້າງຕັ້ງ, ດຳເນີນ, ສືບຕໍ່, ໂຈະ, ຍຸບເລີກ ທຸລະກິດການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ

**ມາດຕາ 10 ການຂໍອະນຸຍາດສ້າງຕັ້ງ, ດຳເນີນທຸລະກິດ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງ, ດຳເນີນທຸລະກິດບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ແມ່ນໃຫ້ຍື່ນຄຳຮ້ອງຜ່ານລະບົບປະຕູດຽວຕາມການແບ່ງຂັ້ນຄຸ້ມຄອງ;

ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງແລ້ວຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງພິຈາລະນາຄຳຮ້ອງດັ່ງກ່າວຊ້າສຸດບໍ່ໃຫ້ເກີນ

08 ວັນລັດຖະການນັບແຕ່ວັນທີ່ໄດ້ຮັບຄໍາຮ້ອງເປັນຕົ້ນໄປ ໂດຍຜ່ານການບໍລິການລະບົບປະຕູດຽວ.

**ມາດຕາ 11 ການຂໍອະນຸຍາດສືບຕໍ່ດໍາເນີນທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂໍອະນຸຍາດສືບຕໍ່ດໍາເນີນທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ແມ່ນໃຫ້ຍື່ນຄໍາຮ້ອງຂໍສືບຕໍ່ຢູ່ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ;

ພາຍຫຼັງທີ່ໄດ້ຮັບຄໍາຮ້ອງຂໍອະນຸຍາດສືບຕໍ່ດໍາເນີນທຸລະກິດຮ້ານອາຫານ, ຮ້ານກິນດື່ມ, ຮ້ານບັນເທີງປະຈໍາປີແລ້ວ ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຕ້ອງພິຈາລະນາຄໍາຮ້ອງດັ່ງກ່າວພາຍໃນເວລາ 05 ວັນລັດຖະການນັບແຕ່ວັນທີ່ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

**ມາດຕາ 12 ການພິຈາລະນາໂຈະ, ຍຸບເລີກ ການດໍາເນີນທຸລະກິດ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ການພິຈາລະນາໂຈະ, ຍຸບເລີກ ການດໍາເນີນທຸລະກິດ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ແມ່ນອີງຕາມກໍລະນີດັ່ງລຸ່ມນີ້:

1. ການສະເໜີຂອງຜູ້ປະກອບການ;
2. ການກະທໍາຜິດຂອງຜູ້ປະກອບການຕໍ່ກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ສິດ ແລະ ພັນທະຂອງຫົວໜ່ວຍທຸລະກິດ, ຜູ້ໃຊ້ບໍລິການ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ

**ມາດຕາ 13 ສິດ ແລະ ພັນທະຂອງຫົວໜ່ວຍທຸລະກິດການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

**ກ. ສິດຂອງຫົວໜ່ວຍທຸລະກິດ ມີດັ່ງນີ້**

1. ປົກປ້ອງສິດ-ຜົນປະໂຫຍດອັນຖືກຕ້ອງ, ໄດ້ຮັບ ແລະ ນໍາໃຊ້ໝາກຜົນຈາກການດໍາເນີນທຸລະກິດຂອງຕົນ;
2. ເກັບຄ່າບໍລິການຕາມຄວາມເປັນຈິງ;
3. ດໍາເນີນທຸລະກິດຖືກຕ້ອງຕາມເງື່ອນໄຂ ແລະ ມາດຕະຖານການບໍລິການ;
4. ຮ້ອງຂໍຄວາມເປັນທໍາຕໍ່ອົງການຈັດຕັ້ງທີ່ມີສິດ-ອໍານາດ ເມື່ອເຫັນວ່າການດໍາເນີນທຸລະກິດຂອງຕົນບໍ່ໄດ້ຮັບຄວາມເປັນທໍາ;
5. ສືບຕໍ່ດໍາເນີນ, ຂໍໂຈະ, ຂໍຍຸບເລີກ ທຸລະກິດຕາມຄວາມສະໝັກໃຈ;
6. ກວດບັດປະຈໍາຕົວຜູ້ເຂົ້າໃຊ້ບໍລິການຮ້ານບັນເທີງ;
7. ນໍາໃຊ້ສິດອື່ນໆ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ຂ. ພັນທະຂອງຫົວໜ່ວຍທຸລະກິດ ມີດັ່ງນີ້:**

1. ເຄົາລົບ ແລະ ປະຕິບັດ ກົດໝາຍ, ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ;

2. ດຳເນີນທຸລະກິດຖືກຕ້ອງຕາມເງື່ອນໄຂ, ມາດຕະຖານລວມ ແລະ ມາດຕະຖານສະເພາະຂອງການບໍລິການ;

3. ຕໍ່ໃບອະນຸຍາດດຳເນີນທຸລະກິດ ຕາມເວລາທີ່ທາງການກຳນົດ;

4. ບໍລິການລູກຄ້າຕາມເງື່ອນໄຂມາດຕະຖານ ອາຫານ-ເຄື່ອງດື່ມໃຫ້ສະອາດ, ຮັກສາສິ່ງແວດລ້ອມ, ມີຄວາມສະຫງົບ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍທຸກປະການ;

5. ຕິດຕັ້ງປ້າຍແນະນຳ, ປ້າຍຫ້າມ, ປ້າຍເຕືອນ, ກົດລະບຽບ ແລະ ເບີໂທແຈ້ງເຫດໃສ່ຕາມຈຸດຕ່າງໆ ພາຍໃນ ແລະ ພາຍນອກຫ້ອງບໍລິການ ເຊັ່ນ: ປະຕູເຂົ້າ-ອອກ, ຝາຫ້ອງ, ກະດານ ຫຼື ປ້າຍໄຟຟ້າ ແລະ ຈຸດອື່ນໆທີ່ເໝາະສົມ;

6. ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ໃຊ້ບໍລິການໃຫ້ໄດ້ຮັບຄວາມສະດວກສະບາຍ, ບໍລິສຸດສັດຊື່ ແລະ ເປັນທຳ;

7. ຜູ້ປະກອບການ ແລະ ພະນັກງານບໍລິການ ຕ້ອງນຸ່ງຖື, ແຕ່ງກາຍ, ເວົ້າຈາ ແລະ ມີກິລິຍາທ່າທີສຸພາບຮຽບຮ້ອຍ;

8. ເສຍພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການໃຫ້ລັດ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການໃນແຕ່ລະໄລຍະ;

9. ປະຕິບັດໂມງເວລາປິດຕາມທາງການກຳນົດ, ໃຫ້ການຮ່ວມມືທີ່ດີຕໍ່ການຈັດຕັ້ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

10. ເຂົ້າຮ່ວມສະມາຄົມທ່ອງທ່ຽວລາວ ຫຼື ສະມາຄົມໂຮງແຮມ-ຮ້ານອາຫານ ແລະ ເຂົ້າຮ່ວມກິດຈະກຳສົ່ງເສີມການທ່ອງທ່ຽວ, ການຊ່ວຍເຫຼືອ ແລະ ກິດຈະກຳອື່ນໆທີ່ເປັນປະໂຫຍດຕໍ່ສັງຄົມ;

11. ປະຕິບັດພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ;

**ມາດຕາ 14 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

**ກ. ສິດຂອງຜູ້ໃຊ້ບໍລິການ ມີດັ່ງນີ້:**

1. ໄດ້ຮັບຄວາມສະດວກສະບາຍຈາກການບໍລິການຕາມຄວາມເໝາະສົມ;
2. ຮ້ອງຂໍຄວາມເປັນທຳຕໍ່ອົງການກ່ຽວຂ້ອງ ເມື່ອເຫັນວ່າຕົນຖືກເອົາປຽບຈາກຜູ້ໃຫ້ບໍລິການ;
3. ແຈ້ງ ຫຼື ລາຍງານຕໍ່ການຈັດຕັ້ງ ຫຼື ເຈົ້າໜ້າທີ່ກ່ຽວຂ້ອງ ເມື່ອພົບເຫັນສິ່ງທີ່ບໍ່ຖືກຕ້ອງ;
4. ນຳໃຊ້ສິດອື່ນໆຕາມກົດໝາຍ ແລະ ລະບຽບການ.

**ຂ. ພັນທະຂອງຜູ້ໃຊ້ບໍລິການ ມີດັ່ງນີ້:**

1. ຈ່າຍຄ່າບໍລິການ ຖືກຕ້ອງຕາມຄວາມເປັນຈິງ;
2. ໃຫ້ການຮ່ວມມືທີ່ດີຕໍ່ເຈົ້າໜ້າທີ່, ການຈັດຕັ້ງ ແລະ ພະນັກງານບໍລິການ;
3. ນຸ່ງຖື, ແຕ່ງກາຍ, ເວົ້າຈາ ແລະ ມີພຶດຕິກຳສຸພາບຮຽບຮ້ອຍ;
4. ຮັກສາຄວາມສະຫງົບປອດໄພ ແລະ ຄວາມສະອາດສວຍງາມ ໃນສະຖານທີ່ບໍລິການ;
5. ປະຕິບັດໂມງເວລາປິດການບໍລິການຢ່າງເຂັ້ມງວດ;
6. ປະຕິບັດພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ.

# ໝວດທີ 5
# ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມສຳລັບຫົວໜ່ວຍທຸລະກິດບໍລິການ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ຫົວໜ່ວຍທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ຫ້າມມີພຶດຕິກຳດັ່ງນີ້:

1. ປຸກສ້າງ ແລະ ດຳເນີນທຸລະກິດຢູ່ໃນເຂດຫວງຫ້າມ ຊຶ່ງໄດ້ລະບຸໄວ້ໃນມາດຕາ 8 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້;

2. ນຳໃຊ້ສະຖານທີ່ເປັນບ່ອນຜະລິດ, ຄ້າຂາຍອາວຸດ, ສິ່ງເສບຕິດ, ວັດຖຸເຄມີ, ທາດເບື່ອທີ່ເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບກາຍ-ຈິດ ຂອງຄົນ;

3. ນຳໃຊ້ສະຖານທີ່ເປັນບ່ອນຄ້າມະນຸດ, ມົ້ວສຸມທາງເພດ-ການພະນັນທຸກປະເພດ, ຂູດຮີດແຮງງານ, ກໍ່ຄວາມວຸ້ນວາຍ, ອາລະວາດຕີກັນ ແລະ ທຳຮ້າຍຮ່າງກາຍ;

4. ການຟ້ອນ, ເຕັ້ນລຳ, ສະແດງ ແລະ ການນຸ່ງຖືທີ່ມີລັກສະນະໂປ້ເປືອຍ, ເຍົ້າຍວນ ຫຼື ລາມົກອະນາຈານ;

5. ສິ່ງສຽງເນືອງນັນເປັນການລົບກວນບຸກຄົນ ແລະ ສັງຄົມອ້ອມຂ້າງ;

6. ການປະພຶດ ແລະ ເຄື່ອນໄຫວທີ່ສົ່ງຜົນກະທົບດ້ານລົບຕໍ່ລະບອບການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ສ້າງສິ່ງກີດຂວາງໃຫ້ແກ່ການສັນຈອນ ແລະ ສິ່ງແວດລ້ອມທຳມະຊາດ-ສັງຄົມ;

7. ຊັກຈູງ, ຕົວະຍົວະຫຼອກລວງ, ບັງຄັບນາບຂູ່ໃຫ້ບຸກຄົນອື່ນ ແລະ ພະນັກງານຂອງຕົນເຄື່ອນໄຫວທີ່ຂັດກັບກົດໝາຍ ແລະ ລະບຽບການ;

8. ຜູ້ປະກອບການນຳໃຊ້ຈໍແອວຊີດີ, ເຄື່ອງສາຍໂປເຈັກເຕີ້ ເພື່ອບໍລິການຮ້ອງເພງຄາຣາໂອເກະນອກອາຄານ;

9. ບໍລິການດ້ານສຽງທຸກປະເພດເກີນເວລາ 22:00 ໂມງ ສຳລັບຮ້ານອາຫານ ແລະ ຮ້ານກິນດື່ມ;

10. ຈັດການບໍລິການງານສະແດງຢູ່ຂ້າງນອກເຊັ່ນ: ງານເທສະການສິ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່, ງານລ້ຽງສັງສັນ ແລະ ງານອື່ນໆ ທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

11. ມີພຶດຕິກຳອື່ນທີ່ຂັດກັບກົດໝາຍ ແລະ ລະບຽບການ.

❖ **ສະເພາະຫົວໜ່ວຍທຸລະກິດບໍລິການຮ້ານບັນເທີງ ຫ້າມມີພຶດຕິກຳດັ່ງນີ້ຕື່ມ:**

1. ອະນຸຍາດຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ ເຂົ້າໃຊ້ບໍລິການ;

2. ນຳເອົາເຄື່ອງສຽງ ແລະ ເຄື່ອງເສບດົນຕີທຸກປະເພດອອກມາເສບຢູ່ຂ້າງນອກອາຄານ ຫຼື ນອກຫ້ອງເກັບສຽງ, ເປີດເຄື່ອງສຽງດັງເກີນ 85 ເດຊິເບວ;

3. ນຳໃຊ້ຈໍແອວຊີດີ, ເຄື່ອງສາຍໂປເຈັກເຕີ້ ເພື່ອບໍລິການຮ້ອງເພງຄາຣາໂອເກະຢູ່ຂ້າງນອກຮ້ານບັນເທີງ;

4. ນຳໃຊ້ອາຄານທີ່ເປັນຫ້ອງແຖວ ຫຼື ຫ້ອງທີ່ມີຝາຕິດກັບທີ່ຢູ່ອາໄສຂອງປະຊາຊົນເປີດເປັນຮ້ານບໍລິການບັນເທີງ;

5. ບໍລິການດ້ານ ແສງ, ສີ, ສຽງ ທຸກປະເພດເກີນເວລາ 23:30 ໂມງ, ຮອດເວລາ 24:00 ໂມງ ຕ້ອງໄດ້ປິດສະຖານທີ່ບໍລິການ;

**ມາດຕາ 16 ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການຮ້ານບັນເທີງ**

ສຳລັບຜູ້ໃຊ້ບໍລິການຮ້ານບັນເທີງ ຫ້າມມີພຶດຕິກຳດັ່ງນີ້:

1. ຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ເຂົ້າໃຊ້ບໍລິການຮ້ານບັນເທີງ;

2. ແຕ່ງກາຍດ້ວຍຊຸດນັກຮຽນ-ນັກສຶກສາ, ຊຸດທາງລັດຖະການ ແລະ ຊຸດອື່ນໆທີ່ເປັນການຂັດຕໍ່ກົດໝາຍ, ລະບຽບການ, ສິລະທຳ, ຮີດຄອງອັນດີງາມຂອງປະຊາຊົນບັນດາເຜົ່າເຂົ້າໃນຮ້ານບັນເທີງ;

3. ມີພຶດຕິກຳອື່ນ ທີ່ຂັດກັບກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມສຳລັບພະນັກງານ, ລັດຖະກອນ ແລະ ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງ**

ສຳລັບພະນັກງານ, ລັດຖະກອນ ແລະ ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງກັບການຄຸ້ມຄອງທຸລະກິດບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ຫ້າມມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຮຽກຮ້ອງ ຫຼື ສະແຫວງຫາຜົນປະໂຫຍດໃນຮູບແບບຕ່າງໆ ໂດຍທາງກົງ ຫຼື ທາງອ້ອມ ທີ່ຕິດພັນກັບທຸລະກິດບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ;

2. ມີສ່ວນກ່ຽວພັນກັບສິ່ງເສບຕິດ, ໂສເພນີ, ອາວຸດ ແລະ ສິ່ງຜິດກົດໝາຍ ໃນສະຖານທີ່ບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ;

3. ກົດໜ່ວງຖ່ວງດຶງ, ລະເວັ້ນ ຫຼື ເມີນເສີຍ ຕໍ່ການປະຕິບັດໜ້າທີ່ໃນຄວາມຮັບຜິດຊອບຂອງຕົນ;

4. ສ້າງພັກພວກ, ກຸ່ມກ້ອນ ເພື່ອປົກປ້ອງຜູ້ກະທຳຜິດ;

5. ເຄື່ອນໄຫວທີ່ມີຜົນກະທົບດ້ານລົບຕໍ່ເສດຖະກິດ, ການເມືອງ, ວັດທະນະທຳ-ສັງຄົມ, ຄວາມສະຫງົບ-ປອດໄພ ແລະ ສິ່ງແວດລ້ອມ;

6. ມີພຶດຕິກຳອື່ນໆ ທີ່ຂັດກັບກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ຫ້າມມີພຶດຕິກຳດັ່ງນີ້:

1. ສ້າງສິ່ງກີດຂວາງ, ສິ່ງສຽງລົບກວນ, ຈັດກິດຈະກຳຕ່າງໆ, ສ້າງຄວາມເປິະເປື້ອນເປີຍູ່ໃນ ຫຼື ນອກບໍລິເວນທີ່ມີຜົນກະທົບດ້ານລົບຕໍ່ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ;

2. ມີພຶດຕິກຳອື່ນໆ ທີ່ຂັດກັບກົດໝາຍ ແລະ ລະບຽບການ.

## ໝວດທີ 6

## ຄະນະກຳມະການຄຸ້ມຄອງທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ

**ມາດຕາ 19 ຄະນະກຳມະການຄຸ້ມຄອງ**

ຄະນະກຳມະການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງຂັ້ນແຂວງ ແມ່ນທ່ານຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ເປັນປະທານ, ໂດຍມອບໃຫ້ທ່ານຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນຮອງປະທານ ທັງເປັນຜູ້ປະຈຳການ ແລະ ເປັນຜູ້ປະສານງານກັບທ່ານຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ທ່ານຮອງຫົວໜ້າພະແນກການເງິນແຂວງ, ທ່ານຮອງຫົວໜ້າພະແນກອຸດສາຫະກຳ-ການຄ້າແຂວງ ແລະ ພາກສ່ວນກ່ຽວຂ້ອງເປັນກຳມະການເຄື່ອນໄຫວຈັດຕັ້ງປະຕິບັດຮ່ວມກັນ.

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບກັນໃນທົ່ວແຂວງ ໂດຍມອບໃຫ້ຄະນະກຳມະການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ເປັນຜູ້ຈັດຕັ້ງປະຕິບັດຊຶ່ງປະກອບມີ 3 ຂັ້ນຄື: ແຂວງ, ເມືອງ ແລະ ບ້ານ;

1. ຂັ້ນແຂວງ: ໄດ້ຮັບການແຕ່ງຕັ້ງໂດຍທ່ານເຈົ້າແຂວງ;
2. ຂັ້ນເມືອງ: ໄດ້ຮັບການແຕ່ງຕັ້ງໂດຍທ່ານເຈົ້າເມືອງ;
3. ຂັ້ນບ້ານ: ໄດ້ຮັບການແຕ່ງຕັ້ງໂດຍນາຍບ້ານ.

**ມາດຕາ 20 ສິດ ແລະ ໜ້າທີ່ຄະນະກຳມະການຄຸ້ມຄອງຂັ້ນແຂວງ**

ຄະນະກຳມະການຄຸ້ມຄອງຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງແບບລວມສູນໃນທົ່ວແຂວງ;

2. ຄົ້ນຄວ້າ ແລະ ອອກຮ່າງຂໍ້ຕົກລົງອະນຸມັດສ້າງຕັ້ງ, ດຳເນີນ,ສືບຕໍ່, ໂຈະ ແລະ ຍຸບເລີກທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ທີ່ມີການລົງທຶນຈາກນັກທຸລະກິດພາຍໃນ ແລະ ຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ;

3. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການເຄື່ອນໄຫວຂອງບັນດາຫົວໜ່ວຍທຸລະກິດທີ່ໄດ້ຮັບການອະນຸມັດສ້າງຕັ້ງ, ດຳເນີນ, ສືບຕໍ່ທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ໃນແຕ່ລະໄລຍະເມື່ອເຫັນວ່າມີຄວາມຈຳເປັນເພື່ອລາຍງານຂໍທິດຊີ້ນຳຈາກຂັ້ນເທິງ;

4. ໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການໃຫ້ຜູ້ປະກອບການ, ຜູ້ໃຊ້ບໍລິການໃນທົ່ວສັງຄົມເຂົ້າໃຈ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງມີປະສິດທິຜົນ;

5. ປະສານສົມທົບ ແລະ ຊຸກຍູ້ ເຈົ້າເມືອງ ໃນການແຕ່ງຕັ້ງ ຫຼື ປັບປຸງຄະນະກຳມະການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງຂັ້ນເມືອງ ໃຫ້ມີຄວາມສອດຄ່ອງກັບສະພາບ

ການເຄື່ອນໄຫວວຽກງານແຕ່ລະໄລຍະ ແລະ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີຄວາມເຂັ້ມແຂງ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;

6. ພົວພັນຮ່ວມມືກັບອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ນໍາເອົາບົດຮຽນທີ່ດີຂອງຕ່າງແຂວງ ແລະ ປະເທດເພື່ອນມິດມາໝູນໃຊ້;

7. ສ້າງແຜນ, ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວຂອງຄະນະກໍາມະການ ພ້ອມທັງສະເໜີຂໍທິດຊີ້ນໍາຈາກທ່ານເຈົ້າແຂວງ ໃນແຕ່ລະໄລຍະ.

## ມາດຕາ 21 ສິດ ແລະ ໜ້າທີ່ຄະນະກໍາມະການຄຸ້ມຄອງຂັ້ນເມືອງ

ຄະນະກໍາມະການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ຂັ້ນເມືອງ ແມ່ນທ່ານຮອງເຈົ້າເມືອງ ຜູ້ຊີ້ນໍາວຽກງານຂົງເຂດວັດທະນະທໍາ-ສັງຄົມ ເປັນປະທານ, ໂດຍມອບໃຫ້ທ່ານຫົວໜ້າຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ ເປັນຮອງປະທານ ທັງເປັນຜູ້ປະຈໍາການ ແລະ ເປັນຜູ້ປະສານງານກັບທ່ານຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ທ່ານຮອງຫົວໜ້າຫ້ອງການການເງິນເມືອງ, ທ່ານຮອງຫົວໜ້າຫ້ອງການອຸດສາຫະກໍາ-ການຄ້າ ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນກໍາມະການເຄື່ອນໄຫວຈັດຕັ້ງປະຕິບັດຮ່ວມກັນ.

ຄະນະກໍາມະການຄຸ້ມຄອງຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍຕາມທິດຊີ້ນໍາຈາກຂັ້ນເທິງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ;

2. ຄົ້ນຄວ້າ, ອອກຮ່າງຂໍ້ຕົກລົງອະນຸມັດສ້າງຕັ້ງ, ດໍາເນີນ, ສືບຕໍ່, ໂຈະ ແລະ ຍຸບເລີກທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ທີ່ມີການລົງທຶນຈາກນັກທຸລະກິດພາຍໃນຕາມການແບ່ງຂັ້ນຄຸ້ມຄອງ;

3. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການເຄື່ອນໄຫວຂອງບັນດາຫົວໜ່ວຍທຸລະກິດທີ່ໄດ້ຮັບການອະນຸມັດສ້າງຕັ້ງ, ດໍາເນີນ, ສືບຕໍ່ທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ໃນແຕ່ລະໄລຍະເມື່ອມີຄວາມຈໍາເປັນ ພ້ອມທັງການຕັກເຕືອນກໍລະນີທີ່ມີການລະເມີດຂໍ້ຕົກລົງສະບັບນີ້ ແລ້ວລາຍງານຕໍ່ຂັ້ນເທິງຂອງຕົນ;

4. ໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການໃຫ້ຜູ້ປະກອບການ, ຜູ້ໃຊ້ບໍລິການໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້;

5. ປະສານສົມທົບ ແລະ ຊຸກຍູ້ ອໍານາດການປົກຄອງບ້ານ ໃນການຄຸ້ມຄອງການບໍລິການ ຮ້ານອາຫານ ຮ້ານກິນດື່ມ ແລະ ຮ້ານບັນເທີງ ເພື່ອປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ;

6. ສ້າງແຜນ, ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວຂອງຄະນະກໍາມະການ ພ້ອມທັງສະເໜີຂໍທິດຊີ້ນໍາຈາກຂັ້ນເທິງຖັດຕົນ ໃນແຕ່ລະໄລຍະ.

**ມາດຕາ 22 ສິດ ແລະ ໜ້າທີ່ຄະນະກຳມະການຄຸ້ມຄອງຂັ້ນບ້ານ**

ຄະນະກຳມະການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ຂັ້ນບ້ານ ແມ່ນໄດ້ຮັບການແຕ່ງຕັ້ງ ແລະ ມອບໝາຍຈາກນາຍບ້ານ, ໂດຍຖືເອົາຄະນະກຳມະການໃນຂົງເຂດວັດທະນະທຳ-ສັງຄົມຂັ້ນບ້ານເປັນຜູ້ຈັດຕັ້ງປະຕິບັດໂດຍກົງ.

**ຄະນະກຳມະການຄຸ້ມຄອງ ຂັ້ນບ້ານ ມີໜ້າທີ່ດັ່ງນີ້:**

1. ຮ່ວມ ຫຼື ໄດ້ຮັບການມອບໝາຍຈາກຄະນະກຳມະການຂັ້ນເມືອງ, ເປັນຜູ້ໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ປະຊາຊົນພາຍໃນບ້ານຂອງຕົນຈັດຕັ້ງປະຕິບັດໃຫ້ເຂັ້ມງວດ;

2. ມີສ່ວນຮ່ວມກັບຄະນະກຳມະການຂັ້ນເມືອງ ຕິດຕາມກວດກາ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ບໍລິການ ແລະ ຜູ້ໃຊ້ບໍລິການ ຈັດຕັ້ງປະຕິບັດໃຫ້ມີຄວາມສະຫງົບປອດໄພເປັນຢ່າງດີ;

3. ລາຍງານສ່ອງແສງສະພາບການຕ່າງໆໃນການບໍລິການ ແລະ ການໃຊ້ບໍລິການ ໃນແຕ່ລະໄລຍະໃຫ້ຂັ້ນເມືອງເປັນປົກກະຕິ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການວາງອອກ.

## ໝວດທີ 7

## ການຕິດຕາມກວດກາທຸລະກິດ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ

**ມາດຕາ 23 ຄະນະກຳມະການ ແລະ ອົງການ ຕິດຕາມກວດກາຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

1. ຄະນະກຳມະການຕິດຕາມກວດກາພາຍໃນ ແມ່ນຄະນະກຳມະການດຽວກັນກັບຄະນະກຳມະການຄຸ້ມຄອງທີ່ໄດ້ລະບຸໄວ້ໃນມາດຕາ 20, 21 ແລະ 22 ຂອງຂໍ້ຕົກລົງສະບັບນີ້;

2. ອົງການຕິດຕາມກວດກາພາຍນອກ ປະກອບດ້ວຍ ສະພາປະຊາຊົນແຂວງ, ໜ່ວຍງານ ສະມາຊິກສະພາປະຊາຊົນແຂວງປະຈຳເມືອງ, ອົງການກວດກາລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ແລະ ເມືອງ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງອົງການ ແລະ ຂະແໜງການກ່ຽວຂ້ອງ**

1. **ຂະແໜງການຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ:**

ກວດກາມາດຕະຖານການອະນຸຍາດສ້າງຕັ້ງ ແລະ ການອອກອະນຸຍາດດຳເນີນທຸລະກິດປະເພດ ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງທີ່ມີໜ້າທີ່ຄຸ້ມຄອງຕາມກົດໝາຍ;

2. **ເຈົ້າໜ້າທີ່ ປກສ:**

ກວດກາການເຄື່ອນຍ້າຍທີ່ຢູ່ອາໄສ, ສຳມະໂນຄົວຂອງຜູ້ປະກອບການ, ພະນັກງານບໍລິການ, ສະກັດກັ້ນ, ຕ້ານອັກຄີໄພ, ຕ້ານການກໍ່ຄວາມບໍ່ສະຫງົບສຸກ ແລະ ອັນຕະລາຍຕ່າງໆທີ່ກ່ຽວພັນກັບຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ;

3. **ຂະແໜງການສາທາລະນະສຸກ:**

ກວດກາດ້ານສຸຂານາໄມຂອງອາຫານ ແລະ ເຄື່ອງດື່ມ, ຕ້ານ, ປ້ອງກັນການລະບາດພະຍາດ ແລະ ເຊື້ອໂລກຕ່າງໆຕາມຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ;

4. **ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:**

ກວດກາມາດຕະຖານດ້ານສິ່ງແວດລ້ອມ, ສະກັດກັ້ນການປະພຶດທີ່ເປັນມົນລະພິດດ້ານຕ່າງໆ ຕາມສະຖານທີ່ກິນ, ດື່ມ ແລະ ບັນເທີງ;

5. **ຂະແໜງການໂຍທາທິການ ແລະ ຂົນສົ່ງ:**

ກວດກາມາດຕະຖານດ້ານການປຸກສ້າງ, ດ້ານເຕັກນິກການເຄຫະ-ຜັງເມືອງ, ສະຖານທີ່ຈອດ ພາຫະນະຂອງຜູ້ໃຊ້ບໍລິການຕາມຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ;

6. **ຂະແໜງການອຸດສາຫະກຳ ແລະ ການຄ້າ:**

ກວດກາຄຸນນະພາບ, ມາດຕະຖານສິນຄ້າ ແລະ ການເຄື່ອນໄຫວທຸລະກິດ ຕາມກົດໝາຍທຸລະກິດ;

7. **ອົງການ ແລະ ຂະແໜງການກ່ຽວຂ້ອງ:**

ກວດກາການປະຕິບັດພັນທະ, ກວດກາການຮ້ອງຟ້ອງ, ການຖືກຮ້ອງຟ້ອງ ແລະ ການກວດກາ ອື່ນໆທີ່ມີການຕົກລົງສະເພາະ;

8. **ກຸ່ມຜູ້ປະກອບການທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ**

ກວດກາການເຄື່ອນໄຫວຂອງສະມາຊິກໃນກຸ່ມຜູ້ປະກອບການໃຫ້ຖືກຕ້ອງຕາມລະບຽບ, ກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ກົດລະບຽບຂອງສະມາຄົມ, ເຂົ້າຮ່ວມແກ້ໄຂຂໍ້ຂັດແຍ່ງໃນຂົງເຂດວຽກງານ ກຸ່ມທຸລະກິດ.

**ມາດຕາ 25 ເນື້ອໃນການຕິດຕາມກວດກາ**

1. ຕິດຕາມກວດກາບັນດາຫົວໜ່ວຍທຸລະກິດ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ;

2. ຕິດຕາມກວດກາການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ຕິດຕາມກວດກາຕາມການສະເໜີຂອງປະຊາຊົນ ຕໍ່ກັບພຶດຕິກຳຂອງພະນັກງານຄຸ້ມຄອງ ແລະ ບັນດາຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ.

**ມາດຕາ 26 ຮູບການຕິດຕາມກວດກາ**

1. ການກວດກາປົກກະຕິ ຊຶ່ງເປັນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ເປັນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າໃນເວລາອັນແນ່ນອນ;

3. ການກວດກາແບບກະທັນຫັນ ແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

ໃນເວລາດຳເນີນການເຄື່ອນໄຫວຕິດຕາມກວດກາ ຕ້ອງປະຕິບັດຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 8
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 27 ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ

ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ແມ່ນຄະນະກຳມະການດຽວກັນກັບຄະນະກຳມະການຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ປະກອບດ້ວຍສອງຂັ້ນຄື: ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຂັ້ນແຂວງ ໄດ້ຮັບການແຕ່ງຕັ້ງຈາກທ່ານເຈົ້າແຂວງ ແລະ ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຂັ້ນເມືອງ ໄດ້ຮັບການແຕ່ງຕັ້ງຈາກທ່ານເຈົ້າເມືອງ.

### ມາດຕາ 28 ສິດ ແລະ ໜ້າທີ່ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ

ສິດ ແລະ ໜ້າທີ່ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ມີດັ່ງນີ້:

1. ເຂົ້າຮ່ວມແຕ່ຫົວທີໃນການແກ້ໄຂບັນຫາ ໃນເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ;
2. ນຳເອົາຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ບັນດາຫົວໜ່ວຍທຸລະກິດ ມາກວດກາ, ຄົ້ນຄວ້າພິຈາລະນາ ຢ່າງຮອບດ້ານພາວະວິໄສ ແລະ ແກ້ໄຂໃຫ້ໄດ້ຮັບຄວາມເປັນທຳ;
3. ປະສານກັບຄູ່ກໍລະນີ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອເກັບກຳຂໍ້ມູນຫຼັກຖານໃນການແກ້ໄຂຂໍ້ຂັດແຍ່ງ;
4. ສະຫຼຸບລາຍງານຜົນຂອງການແກ້ໄຂຂໍ້ຂັດແຍ່ງ ແລ້ວຂໍທິດຊີ້ນຳຈາກຂັ້ນເທິງ;
5. ແຈ້ງຜົນການແກ້ໄຂຂໍ້ຂັດແຍ່ງໃຫ້ຄູ່ກໍລະນີ ແລະ ພາກສ່ວນກ່ຽວຂ້ອງຮັບຊາບ ຢ່າງເປັນທາງການ.

### ມາດຕາ 29 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງສາມາດດຳເນີນດ້ວຍຮູບການດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍການຕັດສິນຂອງສານ.

**ມາດຕາ 30 ການປະນີປະນອມ**

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີສາມາດແກ້ໄຂດ້ວຍການປຶກສາຫາລື, ເຈລະຈາ, ຕົກລົງກັນ ໂດຍໃຫ້ຕ່າງຝ່າຍໄດ້ຮັບຜົນປະໂຫຍດ;

**ມາດຕາ 31 ການແກ້ໄຂທາງດ້ານບໍລິຫານ**

ເມື່ອມີຂໍ້ຂັດແຍ່ງທີ່ບໍ່ສາມາດປະນີປະນອມກັນໄດ້ ຄູ່ກໍລະນີສາມາດສະເໜີໃຫ້ອົງການບໍລິຫານພິຈາລະນາ ແກ້ໄຂທາງດ້ານບໍລິຫານ.

**ມາດຕາ 32 ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂັດແຍ່ງເກີດຂຶ້ນ ຄູ່ກໍລະນີສາມາດສະເໜີໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 33 ການດຳເນີນມາດຕະການທາງດ້ານກົດໝາຍ**

ໃນກໍລະນີມີຂໍ້ຂັດແຍ່ງທີ່ບໍ່ສາມາດແກ້ໄຂດ້ວຍຮູບການອື່ນໄດ້ ຄູ່ກໍລະນີມີສິດຮ້ອງຟ້ອງຂຶ້ນສານເພື່ອໃຫ້ ສານພິຈາລະນາ ຫຼື ພິພາກສາຕາມກົດໝາຍ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍການ ຄຸ້ມຄອງການບໍລິການຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ ສະບັບນີ້ ຈະໄດ້ຮັບການຍ້ອງຍໍ, ສົມລະເສີນ, ປະຕິບັດນະໂຍບາຍອື່ນໆ ຕາມກົດໝາຍ ແລະ ລະບຽບການຕ່າງໆ ຕາມຄວາມເໝາະສົມ.

**ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ ຕິຕຽນຄວາມຜິດ, ປັບໃໝ ໃຊ້ແທນຄ່າເສຍຫາຍ, ລົງວິໄນຕາມຄວາມຜິດ ຫຼື ລົງໂທດທາງອາຍາຕາມກໍລະນີ ໜັກ ຫຼື ເບົາ.

## ໝວດທີ 10

## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ອົງການປົກຄອງແຂວງມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນໃຈກາງໃນການປະສານສົມທົບກັບຄະນະກຳມະການຕ່າງໆທີ່ກ່ຽວຂ້ອງຂັ້ນແຂວງ, ອຳນາດການປົກຄອງເມືອງ ແລະ ບ້ານໃນເຂດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງຕັ້ງຢູ່ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ນັບຕັ້ງແຕ່ວັນທີ່ໄດ້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນເປັນຕົ້ນໄປ;

ຂໍ້ກຳນົດ, ບົດບັນຍັດ, ລະບຽບການສະບັບໃດທີ່ປະກາດໃຊ້ໃນເມື່ອກ່ອນກ່ຽວກັບການຄຸ້ມຄອງທຸລະກິດຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງທີ່ມີການບັນເທີງ ພາຍໃນແຂວງສະຫວັນນະເຂດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ອນແຕ່ຖືກຍົກເລີກ.

**ເຈົ້າແຂວງໆສະຫວັນນະເຂດ**

ແຂວງ ສະຫວັນນະເຂດ

ສັນຕິພາບ ພົມວິຫານ,